# ການສະຫຼຸບຕີລາຄາ
# ການຈັດຕັ້ງປະຕິບັດແຜນພັດທະນາ
# ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ກາງສະໄໝ,
# ຍຸດທະສາດການເງິນ ແລະ ຂອບການຟື້ນຟູເສດຖະກິດ ຂອງ ສປປ ລາວ

**ນຳສະເໜີໂດຍ:**
**ທ່ານ ນາງ ພອນວັນ ອຸທະວົງ**
**ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**

**ກອງປະຊຸມໂຕະມົນ ປະຈຳປີ 2023**
**13 ກຸມພາ 2024**

# ເນື້ອໃນນຳສະເໜີ

1. ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025)
2. ຄວາມຄືບໜ້າການປະຕິບັດຍຸດທະສາດການເງິນ ແລະ ຂອບການຟື້ນຟູເສດຖະກິດ ຂອງ ສປປ ລາວ
3. ແຜນການສືບຕໍ່ປະຕິບັດທ້າຍສະໄໝ ຮອດປີ 2025

# ການສະຫຼຸບຕີລາຄາ
# ການຈັດຕັ້ງປະຕິບັດການສະໄໝ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX

# (2021-2025)

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

## ປະກອບດ້ວຍ: 6 ເປົ້າໝາຍ ແລະ 25 ວຽກຈຸດສຸມບູລິມະສິດ

- ມີຂອບຕິດຕາມ ແລະ ປະເມີນຜົນ (M & E framework)
- ໄດ້ເຊື່ອມສານ ປພຍ (SDGs), ມາດຖານຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ LDC ແລະ ຍຸດທະສາດເພື່ອການເຕີບໂຕສີຂຽວ.



# ສະພາບແວດລ້ອມພາກພື້ນ, ສາກົນ ແລະ ພາຍໃນ

## ສະພາບພາຍນອກ

- ຜົນກະທົບຈາກການລະບາດໂຄວິດ-19
- ຄວາມຂັດແຍ້ງບາງຂົງເຂດ (ລາຄາ ພະລັງງານ, ອັດຕາເງິນເຟີ້ ທົ່ວໂລກ ເພີ່ມ ຂຶ້ນ)
- ແລະ ອື່ນໆ

## ສະພາບພາຍໃນ

- ຄວາມຫຍຸ້ງຍາກເສດຖະກິດ-ການເງິນ
- ຜົນກະທົບຈາກການລະບາດໂຄວິດ-19
- ໄພທຳມະຊາດ

# ເປົ້າໝາຍ 1: ການຂະຫຍາຍຕົວຂອງເສດຖະກິດ

## ຜົນໄດ້ຮັບທີ່ສຳຄັນ

- GDP ຂະຫຍາຍຕົວ 4,03% (ແຜນການ 5 ປີສະເລ່ຍ 4,0%)
- ຂະຫຍາຍຖານອາກອນ ແລະ ປັບປຸງກົນໄກການເກັບພາສີຕາມດ່ານສາກົນ, ຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ (ເນື່ອງຈາກລັດຖະບານໄດ້ສຸມໃສ່ປັບປຸງກົນໄກການຄຸ້ມຄອງໃຫ້ມີປະສິດທິພາບຫຼາຍຂຶ້ນ)
- ສ້າງຄວາມເຂັ້ມແຂງດ້ານມາດຕະການການຄຸ້ມຄອງເງິນຕາ
- ການຜະລິດກະສິກຳ, ອຸດສາຫະກຳ ເພື່ອທົດແທນການນຳເຂົ້າໄດ້ຂະຫຍາຍຕົວ

## ສິ່ງທ້າທາຍຕົ້ນຕໍ

- ຄຸນນະພາບການເຕີບໂຕຍັງບໍ່ທັນສູງ
- ອັດຕາເງິນເຟີ້ຢູ່ໃນລະດັບສູງ
- ເງິນກີບອ່ອນຄ່າ
- ຄຸນນະພາບຂອງການຜະລິດເປັນສິນຄ້າ

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| GDP | 4.03 | 4.00 | ຄາດວ່າຈະບັນລຸແຜນ |
| ກະສິກຳ | 3.10 | 2.50 | ຄາດວ່າຈະບັນລຸແຜນ |
| ອຸດສາຫະກຳ | 4.53 | 4.10 | ຄາດວ່າຈະບັນລຸແຜນ |
| ບໍລິການ | 4.00 | 6.00 | ຄາດວ່າຈະບໍ່ບັນລຸແຜນ |
| ພາສີ-ອາກອນ | 3.60 | 5.80% | ຄາດວ່າຈະບໍ່ບັນລຸແຜນ |

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| ອັດຕາແລກປ່ຽນແຕ່ລະປີທຽບໃສ່ເງິນໂດລາສະຫະລັດ | -18.32 | ±5 | ຄາດວ່າຈະບໍ່ບັນລຸແຜນ |
| ອັດຕາເງິນເຟີ້ | 18.25 | ≤ 6 | ຄາດວ່າຈະບໍ່ບັນລຸແຜນ |

# ເປົ້າໝາຍ 2: ການພັດທະນາຊັບພະຍາກອນມະນຸດ

## ຜົນໄດ້ຮັບທີ່ສຳຄັນ

- ອັດຕາການຈົບຊັ້ນປະຖົມສຶກສາເພີ່ມຂຶ້ນ
- ອັດຕາການຕາຍຂອງແມ່ ແລະ ເດັກ ຫຼຸດລົງ
- ຂະຫຍາຍອັດຕາການຊົມໃຊ້ວິດຖ່າຍ
- ການຝຶກອົບຮົມວິຊາຊີບຂອງໄວໜຸ່ມ

## ສິ່ງທ້າທາຍຕົ້ນຕໍ

- ການປະລະການຮຽນຂອງນັກຮຽນຊັ້ນປະຖົມ ແລະມັດທະຍົມຕົ້ນ, ຂາດແຄນຄູ
- ບັນຫາດ້ານໂພຊະນາການ ເຂດຊົນນະບົດ
- ການເຂົ້າເຖິງບໍລິການດ້ານສາທາລະນະສຸກຢູ່ເຂດຫ່າງໄກສອກຫຼີກ
- ການຄຸ້ມຄອງແຮງງານ (ແຮງງານໄປເຮັດວຽກປະເທດ)

| | ປະຕິບັດ | ແຜນການ | ຄາດຄະເນ |
|---|---|---|---|
| ອັດຕາເຂົ້າຮຽນໃຫມ່ລວມ ປ.5 | 96.2 | 97 | ສ່ຽງຈະບໍ່ບັນລຸ |
| ອັດຕາຈົບຊັ້ນປະຖົມ | 93.1 | 94 | ຈະສາມາດບັນລຸ |
| ອັດຕາການເລື່ອນຊັ້ນ ປ.5 ຂຶ້ນ ມ.1 | 84.5 | 85 | ຈະສາມາດບັນລຸ |
| ອັດຕາປະລະຂອງນັກຮຽນຊັ້ນປະຖົມ | 4.4 | 4 | ສ່ຽງຈະບໍ່ບັນລຸ |
| ອັດຕາເຂົ້າຮຽນໃຫມ່ລວມ ມ.4 | 65.3 | 68 | ສ່ຽງຈະບໍ່ບັນລຸ |
| ອັດຕາປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນຕົ້ນ | 11.2 | 11 | ສ່ຽງຈະບໍ່ບັນລຸ |
| ປະຊາກອນຫນຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ | 112,559 | 150,000 | ຈະສາມາດບັນລຸ |
| ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບທຽບໃສ່ຈຳນວນນັກຮຽນທີ່ມັດທະຍົມຕອນຕົ້ນພາຍໃນ ປີ 2025 | 1.4 | 3 | ສ່ຽງຈະບໍ່ບັນລຸ |
| ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳຫນັກຕ່ຳກວ່າມາດຕະຖານຂອງປະຊາກອນກຸ່ມເປົ້າຫມາຍ | 24.3 | 15 | ສ່ຽງຈະບໍບັນລຸ |
| ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານຂອງປະຊາກອນກຸ່ມເປົ້າຫມາຍ | 32.8 | 27 | ສ່ຽງຈະບໍບັນລຸ |
| ອັດຕາການເກີດລູກມີແພດຊ່ວຍ ຂອງປະຊາກອນກຸ່ມເປົ້າໝາຍ | 85.1 | 85 | ຈະສາມາດບັນລຸ |
| ອັດຕາການໃຫ້ວັກຊີນກັນພະຍາດໃນເດັກ ລຸ່ມ 1 ປີ ຂອງປະຊາກອນກຸ່ມເປົ້າໝາຍ | 96.2 | 95 | ຈະສາມາດບັນລຸ |
| ອັດຕາຊົມໃຊ້ນ້ຳສະອາດ ຂອງປະຊາກອນທັງໝົດ | 93.3 | 95 | ຈະສາມາດບັນລຸ |
| ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ຂອງຄອບຄົວທັງໝົດ | 84.6 | 85 | ຈະສາມາດບັນລຸ |

# ເປົ້າໝາຍ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ

## ຜົນໄດ້ຮັບທີ່ສຳຄັນ

- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ
- ຈຳນວນຄອບຄົວ, ບ້ານ ແລະ ເມືອງທຸກຍາກຫຼຸດລົງເທື່ອລະກ້າວ
- ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ

## ສິ່ງທ້າທາຍຕົ້ນຕໍ

- ບັນຫາຄວາມທຸກຍາກຂອງປະຊາຊົນ (ຄ່າຄອງຊີບ, ລາຄາສະບຽງອາຫານ)
- ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ ຍັງຈຳກັດ (ເຂດຫ່າງໄກສອກຫຼີກ)

**ຜົນການຈັດຕັ້ງປະຕິບັດຕົວຊີ້ບອກສຳຄັນ**

| ຕົວຊີ້ບອກ | ຫົວໜ່ວຍ | ປະຕິບັດ | ຄາດໝາຍ | ຄາດໝາຍຜົນໄດ້ຮັບ |
|---|---|---|---|---|
| ສ້າງຄອບຄົວພົ້ນທຸກ | ຄອບຄົວ | 48.067 | 204.360 | ບໍ່ສຳເລັດ |
| ສ້າງບ້ານພົ້ນທຸກ | ບ້ານ | 482 | 3.104 | ບໍ່ສຳເລັດ |
| ສ້າງຄອບຄົວພັດທະນາ | ຄອບຄົວ | 50.076 | 245.754 | ບໍ່ສຳເລັດ |
| ສ້າງຕົວແບບບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ | ບ້ານ | 12 | 10 | ສຳເລັດ |
| ສ້າງເມືອງພົ້ນທຸກ | ເມືອງ | 11 | 69 | ບໍ່ສຳເລັດ |
| ສ້າງບ້ານພັດທະນາ | ບ້ານ | 559 | 4.420 | ບໍ່ສຳເລັດ |

# ເປົ້າໝາຍ 4: ປົກປັກຮັກສາສິ່ງແວດລ້ອມ

## ຜົນໄດ້ຮັບທີ່ສຳຄັນ

- ສຳເລັດການສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານ
- ສ້າງສະຖານີອຸຕຸນິຍົມ, ອຸທົກກະສາດ
- ການຜະລິດກະສິກຳສະອາດ, ການນຳໃຊ້ລົດໄຟຟ້າ, ພະລັງງານລົມ, ແສງອາທິດ
- ໄດ້ສິ່ງເສີມວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ (ໂຄງການຊື້-ຂາຍກາກບອນ ຢູ່ພາກເໜືອ)

## ສິ່ງທ້າທາຍຕົ້ນຕໍ

- ການອອກໃບຕາດິນ
- ການຄຸ້ມຄອງສິ່ງເສດເຫຼືອ
- ຜົນກະທົບຕໍ່ສິ່ງແວດລ້ອມ (ການບຸກລຸກປ່າ, ໂຄງການພັດທະນາ)

# ເປົ້າໝາຍ 5: ປັບປຸງໂຄງລ່າງພື້ນຖານ ແລະ ການຮ່ວມມື

## ຜົນໄດ້ຮັບທີ່ສຳຄັນ

- ການກໍ່ສ້າງໂຄງລ່າງພື້ນຖານຄົມມະນາຄົມມີຄວາມຄືບໜ້າດີສົມຄວນ
- ສຳເລັດການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆເພື່ອໝູນໃຊ້ເສັ້ນທາງລົດໄຟລາວ-ຈີນ
- ສຳເລັດການກໍ່ສ້າງທ່າບົກ 3 ແຫ່ງ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງທ່າບົກອີກ 6 ແຫ່ງ

## ສິ່ງທ້າທາຍຕົ້ນຕໍ

- ການອຳນວຍຄວາມສະດວກໃຫ້ການບໍລິການຂົນສົ່ງ
- ການຄຸ້ມຄອງ ແລະ ບູລະນະຮັກສາເສັ້ນທາງ (ເສັ້ນທາງເປ່ເພຫຼາຍແຫ່ງ)

# ເປົ້າໝາຍ 6: ການຄຸ້ມຄອງບໍລິຫານລັດ

## ຜົນໄດ້ຮັບທີ່ສຳຄັນ

- ປັບປຸງພາລະບົດບາດ ແລະ ກົງຈັກການຈັດຕັ້ງຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ
- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບ ໄປສູ່ກຸ້ມຕົນເອງດ້ານງົບປະມານ 5 ຫົວໜ່ວຍ ແລະ ເພີ່ມອີກ 2 ຫົວໜ່ວຍ (ກົມພາສີ ແລະ ກົມສວຍສາອາກອນ)
- ສ້າງສູນບໍລິການປະຕູດຽວໄດ້ 9 ແຫ່ງ (ເທົ່າກັບ 60% ຂອງແຜນການ)

## ສິ່ງທ້າທາຍຕົ້ນຕໍ

- ກົນໄກການປະສານງານຍັງບໍ່ທັນເຂັ້ມແຂງ
- ການອະນຸມັດການລົງທຶນຂອງພາກເອກະຊົນບາງກໍລະນີຍັງມີຫຼາຍຂັ້ນ, ຫຼາຍຂອດ ພາໃຫ້ຊັກຊ້າ
- ຄວາມຮູ້ຄວາມສາມາດຂອງບຸກຄະລາກອນຍັງຈຳກັດ
- ຖານຂໍ້ມູນຮັບໃຊ້ການພັດທະນາຍັງຈຳກັດ

# ຄວາມຄືບໜ້າການປະຕິບັດຍຸດທະສາດການເງິນ ແລະ ຂອບການຟື້ນຟູເສດຖະກິດ ຂອງ ສປປ ລາວ

# ຂະບວນການສ້າງ ຍຸດທະສາດການເງິນເພື່ອສະໜັບສະໜູນແຜນການ 5 ປີ ຄັ້ງທີ IX(2021-2025)

- ສ້າງຂຶ້ນໃນລະຫວ່າງປີ 2020-2022 ໂດຍອີງໃສ່ຫຼັກການສາກົນ "ການເງິນແຫ່ງຊາດແບບເຊື່ອມສານ"
- ການມີສ່ວນຮ່ວມ: 20 ກົມກອງ ຈາກ 8 ກະຊວງ ແລະ ບັນດາຄູ່ຮ່ວມພັດທະນາຈາກ UNCT, WB, ADB, IMF, EU, GGGI, OECD, DFAT Australia.
- ຍຸດທະສາດການເງິນ ປະກອບດ້ວຍ 5 ພາກທັງໝົດ:
  - ການເງິນພາກລັດພາຍໃນ
  - ການເງິນພາກລັດສາກົນ
  - ການເງິນເອກະຊົນພາຍໃນ
  - ການເງິນເອກະຊົນຕ່າງປະເທດ
  - ການເງິນຂະແໜງບູລິມະສິດ (ຂະແໜງສາທາລະນະສຸກ, ຂະແໜງສຶກສາ ແລະ ຂະແໜງສິ່ງແວດລ້ອມ)
- ສະໜັບສະໜູນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນ

# ຄວາມຄືບໜ້າຍຸດທະສາດການເງິນຮອດປະຈຸບັນ

- ຍຸດທະສາດການເງິນ ໄດ້ຖືກຮັບຮອງໂດຍ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 30  ມິຖຸນາ 2023
- ສໍາເລັດພິທີເປີດຕົວຍຸດທະສາດການເງິນ (2023-2025) ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃນວັນທີ 5 ກໍລະກົດ 2023 ໃຫ້ກຽດເຂົ້າຮ່ວມໂດຍ ທ່ານຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ
- ສໍາເລັດກອງປະຊຸມປຶກສາຫາລືລະດັບສູງວ່າດ້ວຍ ການຄຸ້ມຄອງ, ການປະສານງານ ແລະ ການຕິດຕາມ ຍຸດທະສາດການເງິນ ສໍາລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃນວັນທີ 24 ພະຈິກ 2023, ໂດຍການເປັນປະທານຂອງ ທ່ານລັດຖະມົນຕີ ກຜທ ເພື່ອນໍາສະເໜີຂໍ້ສະເໜີກ່ຽວກັບກົນໄກການຄຸ້ມຄອງ, ປະສານງານ ແລະ ຕິດຕາມ, ລວມມີຂໍ້ສະເໜີ 3 ແບບ ຄື:
    1. ມີການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ຍຸດທະສາດການເງິນ ຕໍ່ກອງປະຊຸມລັດຖະບານ ແລະ ກອງປະຊຸມສະພາແຫ່ງຊາດ ຢ່າງເປັນປົກກະຕິ;
    2. ສ້າງກອງເລຂາເພື່ອສະໜັບສະໜຸນການຈັດຕັ້ງປະຕິບັດ ແລະ ຕິດຕາມຍຸດທະສາດການເງິນ ສໍາລັບແຜນການ 5 ປີ ຄັ້ງທີ 9 (ກອງເລຂາຮ່ວມລະຫວ່າງ ກົມແຜນການ/ກຜທ ແລະ ກົມນະໂຍບາຍການເງິນ/ກງ); ແລະ
    3. ເຊື່ອມສານຍຸດທະສາດການເງິນເຂົ້າໃນການສ້າງແຜນການ 5 ປີ ຄັ້ງທີ X.
- ສືບຕໍ່ປຶກສາຫາລືກັບ ຄູ່ຮ່ວມພັດທະນາ ເພື່ອລະດົມການສະໜັບສະໜູນຈາກ ເຂົ້າໃນໄລຍະການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ທັນຕາມກໍານົດເວລາ

# ຂອບການຟື້ນຟູເສດຖະກິດຂອງ ສປປ ລາວ

ຈຸດປະສົງ:

✓ ເພື່ອພັດທະນາລໍາດັບຄວາມສໍາຄັນ ທີ່ໄດ້ຮັບການປຶກສາຫາລືກັນໃນວົງກວ້າງ ແລະ ການສັງລວມການດໍາເນີນງານໄລຍະສັ້ນ ເຖິງໄລຍະກາງ;

✓ ເພື່ອການຟື້ນຟູຈາກວິກິດການ 4F ແບບຍືນຍົງ, ຄວາມທ້າທາຍທາງເສດຖະກິດໃນປະຈຸບັນ ແລະ ການລະບາດຂອງພະຍາດໂຄວິດ 19 ຕະຫຼອດຮອດການດໍາເນີນງານ

✓ ເພື່ອສ້າງຄວາມທົນທານສໍາລັບວິກິດການໃນອະນາຄົດ.

- ສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະ ນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ແລະ ແຜນຍຸດທະສາດການເງິນ, ແຜນຂະແໜງການ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນແລະເອກະສານອື່ນໆທີ່ມີຢູ່ແລ້ວ ເພື່ອແກ້ໄຂບູລິມະສິດອັນຮີບດ່ວນລະດັບຊາດ;
- ສຸມໃສ່ຈັດຕັ້ງປະຕິບັດທີ່ມີທ່າແຮງ ແລະ ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດທີ່ຂ້ອນຂ້າງຕ່ໍາ ເຊັ່ນດຽວກັນກັບການເສີມສ້າງຄວາມເຂັ້ມແຂງໃຫ້ກັບໂຄງການ ແລະ ແຜນງານທີ່ມີຢູ່ແລ້ວ;
- ສອດຄ່ອງກັບເອກະສານສໍາຄັນອື່ນໆ ລວມທັງກອບການຟື້ນຟູໂຄວິດ 19 ແບບຮອບດ້ານຂອງອາຊຽນ, ແຜນການຈັດຕັ້ງປະຕິບັດ, ແລະ ຍຸດທະສາດໃນການຂ້າມຜ່ານແບບຄ່ອງຕົວເພື່ອອອກຈາກ LDC (ພາຍໃຕ້ການພັດທະນາ);
- ພິຈາລະນາບົດຮຽນທີ່ຖອດຖອນໄດ້ຈາກປະເທດອື່ນ;
- ສຸມໃສ່ການປະຕິບັດໄລຍະສັ້ນ ຫາ ໄລຍະກາງ ທີ່ອາດຈະຫັນໄປສູ່ ແຜນຫ້າປີໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 10;
- ເສີມສ້າງຄວາມພະຍາຍາມໃນການສັງລວມຂໍ້ມູນໃນປະຈຸບັນ ເພື່ອຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບສະຫວັດດີການຂອງປະຊາຊົນ, ຜູ້ທີ່ມີຄວາມສ່ຽງຫຼາຍທີ່ສຸດ ທີ່ໄດ້ຮັບຜົນກະທົບຈາກວິກິດການ 4F

**ຫຼັງຈາກຮັບຮອງຂອບຟື້ນຟູເສດຖະກິດໃນປີ 2022**

- ການຜັນຂະຫຍາຍເຊື່ອມຊຶມ: ເຂົ້າໃນແຜນຂອງຂະແໜງການ, ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ 2021-2023 ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ
- 5 ວຽກຈຸດສຸມໂດຍສອດຄ່ອງກັບເປົ້າໝາຍການພັດທະນາຂອງແຜນການ5 ປີ ຄັ້ງທີ IX, ຍຸດທະສາດການພັດທະນາການເງິນ ແລະ ຍຸດທະສາດຂ້າມຜ່ານອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ຂອງ ສປປ ລາວ;
- ການຕິດຕາມການປະເມີນ ແມ່ນໄປຕາມການປະເມີນແຜນພັດທະ ນາເສດຖະກິດ-ສັຄົມ ແລະ ຂະແໜງການແຕ່ລະໄລຍະ ແລະ ຈາກການປະເມີນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະ ກິດ-ການເງິນ 2021-2023.

# ແຜນການສືບຕໍ່ປະຕິບັດທ້າຍສະໄໝ ຮອດປີ 2025

| ເປົ້າໝາຍ | ວຽກຈຸດສຸມບູລິມະສິດ |
| --- | --- |
| **ເປົ້າໝາຍ 1: ການຂະຫຍາຍຕົວຂອງເສດຖະກິດ** | 1. **ສືບຕໍ່ສຸມໃສ່ແກ້ໄຂບັນຫາເຄັ່ງຮ້ອນດ້ານເສດຖະກິດ-ການເງິນ, ໃນນີ້ສຸມໃສ່ເປັນພິເສດ:**<br>1) ຍູ້ແຮງເກັບລາຍຮັບງົບປະມານໃຫ້ເພີ່ມຂຶ້ນດ້ວຍການຂຸດຄົ້ນຖານລາຍຮັບໃໝ່ ແລະ ການຫັນເປັນທັນສະໄໝໃຫ້ແຂງແຮງກວ່າເກົ່າ<br>2) ດໍາເນີນນະໂຍບາຍເງິນຕາແບບຮັດກຸມ, ດັດສົມເງິນຕາຕ່າງປະເທດໃຫ້ການນໍາເຂົ້າສິນຄ້າຍຸດທະສາດ, ຄຸ້ມຄອງເງິນຕາຕ່າງປະເທດຈາກການສົ່ງອອກ-ນໍາເຂົ້າສິນຄ້າ ແລະ ຂະຫຍາຍຕາໜ່າງບໍລິການແລກປ່ຽນເງິນຕາຂອງຂະນາຄານທຸລະກິດໃນຫຼາຍຮູບແບບ<br>3) ຕິດຕາມ ແລະ ຄຸ້ມຄອງລາຄາສິນຄ້າ ແລະ ຄົ້ນຄ້ວາປັບໂຄງສ້າງລາຄາສິນຄ້າທີ່ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ<br>4) ແກ້ໄຂໜີ້ສິນສາທາລະນະ ດ້ວຍຫຼາຍວິທີ<br>2. **ສົ່ງເສີມການຜະລິດເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ** ຄຽງຄູ່ກັບການຈໍາກັດການນໍາເຂົ້າຢ່າງເຂັ້ມງວດ, ສົ່ງເສີມການທ່ອງທ່ຽວໃຫ້ເພີ່ມຂຶ້ນ (ເປີດປີທ່ອງທ່ຽວ ລາວ ປີ 2024)<br>3. **ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ** ໃຫ້ແຂງແຮງກວ່າເກົ່າ ໂດຍສ້າງເງື່ອນໄຂການເຂົ້າເຖິງແຫຼ່ງທຶນ (ນະໂຍບາຍສິນເຊື່ອຂອງລັດຖະບານ)<br>4. **ປັບປຸງສະພາບແວດລ້ອມການລົງທຶນ** ໃຫ້ມີຄວາມກະທັດຮັດ ແລະ ວ່ອງໄວ ເພື່ອດຶງດູດການລົງທຶນໃຫ້ເພີ່ມຂຶ້ນ<br>5. ປັບປຸງ ແລະ **ປະຕິຮູບລັດວິສາຫະກິດ** ໃຫ້ເຂັ້ມແຂງ ແລະ ມີປະສິດທິຜົນ<br>6. **ປັບປຸງຂອດການບໍລິການຂົນສົ່ງສິນຄ້າ**ຜ່ານດ່ານຊາຍແດນ ແລະ ຢູ່ທ່າບົກຕ່າງໆໃຫ້ສະດວກ ແລະ ວ່ອງໄວ |

| ເປົ້າໝາຍ | ວຽກຈຸດສຸມບູລິມະສິດ |
|---|---|
| **ເປົ້າໝາຍ 2: ການພັດທະນາ ຊັບພະຍາກອນມະນຸດ** | 1. ສືບຕໍ່ປັບປຸງການຮຽນ-ການສອນໃຫ້ມີຄຸນນະພາບ; ສ້າງເງື່ອນໄຂການເຂົ້າເຖິງການສຶກສາ ແລະ ແກ້ໄຂບັນຫາຄູອາສາ, ການຂາດແຄນຄູສອນຢູ່ເຂດຊົນນະບົດ<br>2. ປັບປຸງວຽກງານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ຍົກລະດັບໂຮງໝໍຂັ້ນຕ່າງໆໃຫ້ໄດ້ມາດຖານເງື່ອນໄຂຫຼາຍຂຶ້ນ<br>3. ສືບຕໍ່ຝຶກ ແລະ ພັດທະນາສີມືແຮງງານໃນສາຂາວິຊາຊີບຕ່າງໆ, ສະໜອງແຮງງານຢູ່ພາຍໃນ ແລະ ຕ່າງປະເທດ, ຂຶ້ນບັນຊີຜູ້ອ່ວາງງານ ແລະ ແລະ ປັບປຸງຕາໜ້າຈັດຫາງານ; ສົ່ງເສີມການປະກອບອາຊີບອິດສະຫຼະ; ປັບປຸງຄ່າແຮງງານຂັ້ນຕໍ່າໃຫ້ສອດຄ່ອງກັບສະພາບເສດຖະກິດ |
| **ເປົ້າໝາຍ 3: ປັບປຸງ ຊີວິດການເປັນຢູ່ຂອງ ປະຊາຊົນ** | 1. ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢ່າງຕັ້ງໜ້າ ດ້ວຍການສະໜອງພື້ນຖານໂຄງລ່າງທີ່ຈໍາເປັນຕາມຄວາມສາມາດຂອງງົບປະງານຕົວຈິງ ທັງສົ່ງເສີມພາກສ່ວນເສດຖະກິດຕ່າງໆ ປະກອບສ່ວນພັດທະນາຊົນນະບົດ<br>2. ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ (ຂະຫຍາຍອັດຕາການປົກຄຸມ ແລະ ປັບປຸງບໍລິຫານ ແລະ ການບໍລິການ)<br>3. ເອົາໃຈໃສ່ພັດທະນາວຽກງານປົກປ້ອງທາງສັງຄົມໃຫ້ກວ້າງຂວາງກວ່າເກົ່າ ເພື່ອສ້າງເງື່ອນໄຂໃຫ້ກຸ່ມຄົນດ້ອຍໂອກາດຕ່າງໆໄດ້ຮັບການຊ່ວຍເຫຼືອຢ່າງສົມເຫດສົມຜົນ<br>4. ສຸມໃສ່ວຽກງານແກ້ໄຂລະເບີດບໍ່ທັນແຕກ ໃຫ້ມີຄວາມຄ່ອງຕົວກວ່າເກົ່າ |

| ເປົ້າໝາຍ | ວຽກຈຸດສຸມບູລິມະສິດ |
| --- | --- |
| **ເປົ້າໝາຍ 4: ປົກປັກຮັກສາສິ່ງແວດລ້ອມ** | 1. ສືບຕໍ່ປົກປັກຮັກສາຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ, ສົ່ງເສີມເສດຖະກິດໝູນວຽນ, ການຜະລິດກະສິກຳສີຂຽວ, ການທ່ອງທ່ຽວສີຂຽວ ແລະ ໂຄງການພະລັງງານສະອາດ<br>2. ສ້າງຍຸດທະສາດການນຳໃຊ້ທີ່ດິນຂັ້ນສູນກາງ ແລະ ຂັ້ນແຂວງ; ສືບຕໍ່ຂຶ້ນທະບຽນອອກໃບຕາດິນ ແລະ ສືບຕໍ່ຫັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝ<br>3. ສືບຕໍ່ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແນໃສ່ບັນລຸຄາດໝາຍການຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050<br>4. ສຸມໃສ່ສ້າງ ແລະ ປັບປຸງລະບົບຕິດຕາມສະພາບການປ່ຽນແປງດິນຟ້າອາດກາດ ໃຫ້ມີຄວາມທັນສະໄໝ |
| **ເປົ້າໝາຍ 5: ປັບປຸງໂຄງລ່າງພື້ນຖານ ແລະ ການຮ່ວມມື** | 1. ສືບຕໍ່ພັດທະນາໂຄງລ່າງພື້ນຖານເຊື່ອມໂຍງເຊື່ອມຈອດ ໃຫ້ສຳເລັດຕາມແຜນວາງໄວ້<br>2. ປັບປຸງລະບົບຂົນສົ່ງຕ່າງໆ ໃຫ້ໄດ້ມາດຕະຖານ ແລະ ມີຄວາມວ່ອງໄວ<br>3. ສືບຕໍ່ກໍ່ສ້າງໂຄງລ່າງພື້ນຖານຂອງວຽກງານການຫັນເປັນທັນສະໄໝ ແລະ ການຫັນເປັນເສດຖະກິດດິຈິຕອນເພື່ອຍູ້ແຮງການພັດທະນາເສດຖະກິດ-ສັງຄົມ<br>4. ສືບຕໍ່ຮ່ວມມືກັບປະເທດເພື່ອນມິດສາກົນ, ຄູ່ຮ່ວມພັດທະນາ ຢ່າງຕັ້ງໜ້າ |
| **ເປົ້າໝາຍ 6: ການຄຸ້ມຄອງບໍລິຫານລັດ** | 1. ສືບຕໍ່ປັບປຸງລະບົບ, ກົນໄກການບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ທັນສະໄໝ ໂດຍສະເພາະກົນໄກການອະນຸມັດການລົງທຶນ ແລະ ການດຳເນີນທຸລະກິດເອກະຊົນ<br>2. ສືບຕໍ່ປັບປຸງການຫັນຫົວໜ່ວຍງົບປະມານທີ່ມີລາຍຮັບວິຊາການໄປກຸ້ມຕົນເອງທາງດ້ານງົບປະມານ ແລະ ສ້າງນິຕິກຳທີ່ກ່ຽວກັບການຫັນເປັນພາລະກອນໃຫ້ສຳເລັດ<br>3. ສືບຕໍ່ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ຕາມແຜນກຳນົດໄວ້ |

# ຂໍຂອບໃຈ